ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 1009 /ກອຫ.ມຖ

ນະຄອນຫຼວງວຽງຈັນ, ວັນທີ 18 OCT 2016

# ຄຳແນະນຳ
## ກ່ຽວກັບ ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 1551/ອຄ, ລົງວັນທີ 31 ສິງຫາ 2016.
- ອີງຕາມຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016.

ເພື່ອເປັນການປະກອບສ່ວນເຂົ້າໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ແລະ ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ໃຫ້ໄດ້ຮັບຜົນສຳເລັດ, ປະກອບສ່ວນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ໃຫ້ຍືນຍົງພ້ອມທັງສ້າງຄວາມເຂັ້ມແຂງໃຫ້ຂະແໜງອຸດສາຫະກຳປຸງແຕ່ງໄມ້ ໄປຕາມທິດຂອງການພັດທະນາ.

### ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ ອອກຄຳແນະນຳ ດັ່ງນີ້:

## I. ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ

ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ປະກອບດ້ວຍ 12 ລາຍການ ຫລື

ປະເພດ, ແຕ່ລະປະເພດປະກອບດ້ວຍຫຼາຍຊະນິດ ແລະ ຮູບແບບ, ບາງຊະນິດ ແລະ ຮູບແບບໄດ້ກຳນົດຊະນິດໄມ້, ຂະໜາດຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ຢ່າງຈະແຈ້ງ.

ຜະລິດຕະພັນໄມ້ເພື່ອສົ່ງອອກປະກອບດ້ວຍ: ຊື່ທີ່ລະບຸເປັນພາສາລາວ ແລະ ພາສາອັງກິດ, ເລກລະຫັດສິນຄ້າ ຊຶ່ງປະກອບດ້ວຍເລກລະຫັດເຄົ້າ ແລະ ລະຫັດຍ່ອຍ (ຕາມເອກະສານຊ້ອນທ້າຍ 01 ຂອງຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016) ດັ່ງນີ້:

## 1. ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ

ຜະລິດຕະພັນຂີ້ເລື່ອຍປະກອບດ້ວຍ 02 ຊະນິດ ຄື: ຂີ້ເລື່ອຍອັດແທ່ງ ແລະ ຂີ້ເລື່ອຍອັດເມັດ. ຜະລິດຕະພັນເຫຼົ່ານີ້ ໄດ້ມາຈາກ ຂີ້ເລື່ອຍ, ຂີ້ກົບ, ໄມ້ເສດ ແລະ ສິ່ງແຕກຫັກຂອງໄມ້ ຈາກໂຮງງານປຸງແຕ່ງໄມ້ ມາຕິດລອມເຂົ້າກັນດ້ວຍກາວ ອັດເປັນທ່ອນ, ກ້ອນ, ແຜ່ນ ແລະ ອື່ນໆ. ຂີ້ເລື່ອຍ, ຂີ້ກົບ, ໄມ້ເສດ ແລະ ສິ່ງແຕກຫັກຂອງໄມ້ ຕ້ອງມາຈາກໂຮງງານປຸງແຕ່ງໄມ້, ຖ້າຂຸດຄົ້ນ ຈາກປ່າຕ່າງໆ ຫລື ແຫລ່ງອື່ນໆ ມາຜະລິດເປັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ ແມ່ນຫ້າມສົ່ງອອກ.

## 2. ຜະລິດຕະພັນຖ່ານໄມ້

ຜະລິດຕະພັນຖ່ານໄມ້ປະກອບດ້ວຍ 02 ຊະນິດ ຄື: ຖ່ານຂາວ ແລະ ຖ່ານອັດແທ່ງຈາກຂີ້ເລື່ອຍ, ຊຶ່ງມີລາຍລະອຽດ ດັ່ງນີ້:

2.1 **ຖ່ານຂາວ** ແມ່ນຜະລິດຕະພັນຖ່ານ ຈາກໄມ້ຕີ້ວທີ່ຂຸດຄົ້ນຈາກສວນປູກ ຫຼື ເຂດປ່າຟື້ນຟູ ທີ່ອະນຸຍາດໃຫ້ຂຸດຄົ້ນຕາມລະບຽບການທີ່ກ່ຽວຂ້ອງ, ຊຶ່ງຕິດພັນກັບການສົ່ງເສີມໃຫ້ປະຊາຊົນປູກໄມ້ຕີ້ວ ເພື່ອເປັນວັດຖຸດິບສະໜອງໃຫ້ແກ່ການເຜົາຖ່ານ.

2.2 **ຖ່ານອັດແທ່ງຈາກຂີ້ເລື່ອຍ** ແມ່ນຜະລິດຕະພັນຖ່ານໄມ້ ທີ່ນຳເອົາຂີ້ເລື່ອຍມາອັດເປັນແທ່ງ ຫຼື ເປັນເມັດ ແລ້ວເຜົາ ຫລື ປຸງແຕ່ງເປັນຖ່ານ.

## 3. ຜະລິດຕະພັນໄມ້ປັກເກົ້, ໄມ້ປູພື້ນ ສຳລັບພາຍໃນ

ຜະລິດຕະພັນໄມ້ປັກເກ, ໄມ້ປູພື້ນສຳລັບພາຍໃນ ປະກອບດ້ວຍ 4 ຊະນິດ ຄື: ຜະລິດຕະພັນໄມ້ປັກເກົ້, ຜະລິດຕະພັນໄມ້ປູພື້ນ, ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ ແລະ ຜະລິດຕະພັນໄມ້ຕໍ່ເປັນເສັ້ນ ຊຶ່ງໄດ້ກຳນົດຂະໜາດ ຄວາມໜາ, ຄວາມຍາວ ແລະ ຄວາມກວ້າງ. ຜະລິດຕະພັນໄມ້ເຫລົ່ານີ້ ແມ່ນຜະລິດຕະພັນໄມ້ທີ່ມີຂະໜາດອັນສະເພາະ ໂດຍຜ່ານຂະບວນການປຸງແຕ່ງ ດ້ວຍການອົບ, ຕັດຂະໜາດ, ກົບ, ຂັດ, ອັດດ້ວຍກາວເປັນຊັ້ນ, ແລ່ນຫລີ້ມ ແລະ ຮ່ອງ ຫຼື ບໍ່ແລ່ນຫລີ້ມ ແລະ ຮ່ອງ ແຕ່ກົບໜ້າລຽບສີ່ດ້ານ, ລົງສີ ຫຼື ບໍ່ລົງສີ, ມີບາງຮູບແບບກໍຈະໄດ້ແລ່ນຮ່ອງກັນມີ້ນ.

3.1 ຜະລິດຕະພັນໄມ້ປັກເກົ້ ປະກອບດ້ວຍ 03 ຮູບແບບຄື: ໄມ້ປັກເກົ້ເສັ້ນດຽວ, ໄມ້ປັກເກົ້ເຊື່ອມຕໍ່ປະສານ ແລະ ໄມ້ປັກເກົ້ໂມເສດ.

3.2 ຜະລິດຕະພັນໄມ້ປູພື້ນ ປະກອບດ້ວຍ 05 ຮູບແບບຄື: ໄມ້ປູພື້ນຊິ້ນດຽວ, ໄມ້ປູພື້ນເຊື່ອມຕໍ່ຊິ້ນດຽວ, ໄມ້ປູພື້ນເຊື່ອມຕໍ່ປະສານ, ໄມ້ປູພື້ນອັດເປັນຊັ້ນ ແລະ ໄມ້ແຜ່ນພື້ນເດັກກິງ.

3.3 ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ ປະກອບດ້ວຍ 04 ຮູບແບບຄື: ໄມ້ເພດານແບບຮ່ອງຕົວວີ (V), ໄມ້ເພດານແບບເຊື່ອມຕໍ່ປະສານ, ໄມ້ແອ້ມຝາ ຫຼື ເພດານແບບອັດເປັນຊັ້ນ ແລະ ໄມ້ແອ້ມຝາແບບບູນ.

3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ ແມ່ນຜະລິດຕະພັນໄມ້ທີ່ນຳໃຊ້ໄມ້ສັ້ນ, ໄມ້ນ້ອຍ ມາອັດເຊື່ອມຕໍ່ເຂົ້າກັນດ້ວຍກາວເປັນເສັ້ນຍາວ.

- ຜະລິດຕະພັນບາງຮູບແບບດັ່ງກ່າວ ມີຄຳອະທິບາຍເພີ່ມເຕີມ ດັ່ງນີ້:
- **ຜະລິດຕະພັນໄມ້ປູພື້ນເຊື່ອມຕໍ່ປະສານ** ແມ່ນການນຳໃຊ້ໄມ້ສັ້ນ, ໄມ້ນ້ອຍມາເຊື່ອມຕໍ່ເຂົ້າກັນດ້ວຍກາວ ເປັນເສັ້ນຍາວ, ຊຶ່ງມີຂະບວນການປຸງແຕ່ງເຊັ່ນ: ອົບ, ຕັດຂະໜາດ, ປາດເດືອຍ, ຕິດກາວເຊື່ອມຕໍ່ເຂົ້າກັນເປັນເສັ້ນດຽວ ແລະ ອັດເປັນແຜ່ນຕາມຂະໜາດທີ່ໄດ້ກຳນົດໄວ້, ກົບ, ແລ່ນ ຫລີ້ມ ແລະ ຮ່ອງ, ຂັດ, ລົງສີ ຫຼື ບໍ່ລົງສີ.
- **ໄມ້ປູພື້ນແບບອັດເປັນຊັ້ນ** ແມ່ນການນຳເອົາແຜ່ນໄມ້ ມາຕິດເຂົ້າກັນດ້ວຍກາວ ເປັນ 2 ຊັ້ນ ຫຼື 3 ຊັ້ນ ໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ, ສ່ວນໜ້າດ້ານເທິງແມ່ນໃຊ້ໄມ້ທີ່ມີຄຸນນະພາບດີ ແລະ ສວຍງາມຕິດໃສ່ (ໄມ້ປົກໜ້າ ຄວາມໜາບໍ່ເກີນ 3 ມມ), ຊຶ່ງຜ່ານຂະບວນການປຸງແຕ່ງເຊັ່ນ: ອົບ, ຊອຍ, ຕັດຂະໜາດ, ປາດເດືອຍ ແລະ ອັດເປັນແຜ່ນຕາມຂະໜາດທີ່ໄດ້ກຳນົດໄວ້, ກົບ, ແລ່ນຫລີ້ມ ແລະ ຮ່ອງ, ຂັດ, ລົງສີ ຫຼື ບໍ່ລົງສີ.
- **ໄມ້ແອ້ມຝາ ແລະ ເພດານ** ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງເຊັ່ນ: ອົບ, ຊອຍ ແລະ ຕັດຂະໜາດ, ກົບ, ແລ່ນຫລີ້ມ ແລະ ຮ່ອງ ຫຼື ລົບຫຼຽມ ໃຫ້ເປັນຮູບຊົງ, ຂັດ, ລົງສີ ຫຼື ບໍ່ລົງສີ.
- **ຜະລິດຕະພັນໄມ້ຕໍ່ເປັນເສັ້ນ** ແມ່ນການນຳໃຊ້ໄມ້ສັ້ນ, ໄມ້ນ້ອຍ ມາອັດເຊື່ອມຕໍ່ເຂົ້າກັນດ້ວຍກາວເປັນເສັ້ນຍາວ ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ປາດເດືອຍ, ຕິດກາວເຊື່ອມຕໍ່ເຂົ້າກັນເປັນເສັ້ນດຽວ, ກົບສີ່ດ້ານ, ຂັດ ແລະ ຫຸ້ມຫໍ່ຢ່າງດີ.

## 4. ຜະລິດຕະພັນໄມ້ອັດ

ຜະລິດຕະພັນໄມ້ອັດ ປະກອບດ້ວຍ 07 ຊະນິດ ຄື: ໄມ້ອັດຈາກຂີ້ເລື່ອຍ ຫຼື ຂີ້ກົບ, ໄມ້ອັດຈາກເສດໄມ້ບົດ, ໄມ້ອັດຈາກໃຍໄມ້, ໄມ້ອັດຈາກໄມ້ປອກ, ໄມ້ອັດບະລັອກບອດ, ໄມ້ອັດປະສານ ຫຼື ໄມ້ອັດເຊື່ອມຕໍ່ປະສານ ແລະ ໄມ້ອັດປະສານສຳລັບໜ້າໂຕະ ຊຶ່ງໄດ້ກຳນົດຂະໜາດ ຄວາມໜາ, ຄວາມຍາວ ແລະ ຄວາມກວ້າງ. ວັດຖຸດິບທີ່ນຳໃຊ້ ຕ້ອງແມ່ນໄມ້ປູກ ແລະ ໄມ້ທຳມະຊາດ (ໄມ້ຄຸ້ມຄອງ 1,2,3) ເທົ່ານັ້ນ.

4.1 **ຜະລິດຕະພັນໄມ້ອັດຈາກ ຂີ້ເລື່ອຍ, ຂີ້ກົບ** ແມ່ນຜະລິດຕະພັນໄມ້ຈາກການນຳເອົາຂີ້ເລື່ອຍ ຫຼື ຂີ້ກົບມາປະສົມໃສ່ກາວ ແລ້ວນຳເຂົ້າແມ່ແບບອັດດ້ວຍເຄື່ອງຈັກອັດແໜ້ນ, ອົບດ້ວຍຄວາມຮ້ອນ ເພື່ອໃຫ້ຂີ້ເລື່ອຍ ແລະ ຂີ້ກົບ ເຊື່ອມຕົວເຂົ້າກັນໃຫ້ແຂງຕົວເປັນແຜ່ນ ເພື່ອນຳໃຊ້ຕໍ່ໄປ.

4.2 **ຜະລິດຕະພັນໄມ້ອັດຈາກເສດໄມ້ບົດ** ແມ່ນຜະລິດຕະພັນໄມ້ທີ່ນຳເອົາໄມ້ເນື້ອອ່ອນ ຫລື ໄມ້ປູກ (ໄມ້ວິກ, ໄມ້ກະຖິນບາລົງ ແລະ ກະຖິນເທພາ) ທີ່ມີໜ້າຕ່າງ 14 ຊມ ລົງມາ ລວມທັງໄມ້ເສດ, ໄມ້ນ້ອຍ ແລະ ກິ່ງງ່າໄມ້ຕ່າງໆ ມາບົດ, ອົບ ຫຼັງຈາກນັ້ນນຳມາປະສົມໃສ່ກາວ ແລ້ວນຳເຂົ້າແມ່ແບບອັດດ້ວຍເຄື່ອງຈັກອັດແໜ້ນ, ອົບດ້ວຍຄວາມຮ້ອນ ໃຫ້ເຊື່ອມຕົວເຂົ້າກັນໃຫ້ແຂງຕົວເປັນແຜ່ນ ເພື່ອນຳໃຊ້ຕໍ່ໄປ.

4.3 **ຜະລິດຕະພັນໄມ້ອັດຈາກໄມ້ປອກ** ແມ່ນຜະລິດຕະພັນໄມ້ທີ່ນຳເອົາໄມ້ປອກມາຕິດເຂົ້າກັນແລ້ວອັດດ້ວຍເຄື່ອງຈັກໃຫ້ເປັນແຜ່ນດຽວ. ອາດຈະນຳໃຊ້ໄມ້ປອກ ຕິດໃສ່ດ້ານໜ້າ ຫຼື ດ້ານຫຼັງ, ສ່ວນໃຈກາງອາດນຳໃຊ້ຂີ້ເລື່ອຍ ຫຼື ອື່ນໆ.

4.4 **ໄມ້ອັດປະສານ ຫລື ໄມ້ອັດເຊື່ອມຕໍ່ປະສານ ແລະ ໄມ້ອັດປະສານສຳລັບໜ້າໂຕະ** ແມ່ນຜະລິດຕະພັນໄມ້ ທີ່ນຳເອົາໄມ້ເປັນເສັ້ນ (ໜ້າກ້ວາງບໍ່ເກີນ 15 ຊມ) ຫຼື ນຳເອົາໄມ້ສັ້ນ, ໄມ້ນ້ອຍມາເຊື່ອມຕໍ່ເຂົ້າກັນດ້ວຍກາວ ອັດໜີບເປັນເສັ້ນຍາວ ແລະ ເຊື່ອມຕໍ່ເຂົ້າກັນເປັນແຜ່ນໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຊອຍ, ຕັດຂະໜາດ, ອັດໜີບດ້ວຍເຄື່ອງຈັກອັດແຮງ ແລະ ຂັດກະດາດຊາຍ.

## 5. ຜະລິດຕະພັນເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້

ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້ ປະກອບດ້ວຍຫຼາຍຊະນິດ ແລະ ຮູບແບບ ເຊັ່ນ: ຂອບຮູບ, ຂອບແວ່ນ, ຫີບ, ລັງ, ຖັງ, ພາເລດ, ພາຖາດ, ເຄື່ອງມື ແລະ ອື່ນໆ. ວັດຖຸດິບທີ່ນຳໃຊ້ ຕ້ອງແມ່ນໄມ້ປູກ ແລະ ໄມ້ທຳມະຊາດ (ໄມ້ຄຸ້ມຄອງ 1,2,3). ສຳລັບພາເລດ ໃຫ້ນຳໃຊ້ແຕ່ໄມ້ປູກ (ໄມ້ວິກ, ໄມ້ກະຖິນບາລົງ ແລະ ກະຖິນເທພາ) ແລະ ມີ ຂະໜາດ: ໜາ 5 ຊມ, ກວ້າງ 15 ຊມ ແລະ ຍາວ 200 ຊມ ລົງມາ ເທົ່ານັ້ນ.

## 6. ຜະລິດຕະພັນໄມ້ປະກອບໃນອາຄານ

ຜະລິດຕະພັນໄມ້ປະກອບໃນອາຄານ ປະກອບດ້ວຍ 07 ຊະນິດ ຄື: ຊຸດປ່ອງຢ້ຽມ, ຊຸດປະຕູ, ແຜ່ນໄມ້ມຸງຫຼັງຄາ, ແຜ່ນໄມ້ຮື້ວ, ແຜ່ນໄມ້ປະກອບແບບລາຍໂມເສດ, ຜະລິດຕະພັນໄມ້ຂອບອັດເປັນຊັ້ນ ແລະ ຊຸດຂັ້ນໄດ ຊຶ່ງໄດ້ກຳນົດຂະໜາດ ຄວາມໜາ, ຄວາມຍາວ ແລະ ຄວາມກວ້າງ.

ຜະລິດຕະພັນໄມ້ປະກອບໃນອາຄານ ຕ້ອງເປັນຜະລິດຕະພັນໄມ້ສຳເລັດຮູບ ທີ່ສາມາດນຳໃຊ້ໄດ້ເລີຍ, ສາມາດປະກອບເຂົ້າ ແລະ ແຍກອອກຈາກກັນໄດ້ທັນທີ (Knock-down) ເພື່ອສະດວກໃນການຂົນສົ່ງ, ແຕ່ຕ້ອງຄົບເປັນຊຸດ ຫຼື ເປັນໜ່ວຍ ເຊັ່ນ: ຊຸດປ່ອງຢ້ຽມ, ຊຸດປະຕູ, ຊຸດຂັ້ນໄດ (ບໍ່ອະນຸຍາດໃຫ້ສົ່ງອອກເປັນຊິ້ນສ່ວນດຽວ).

6.1 **ໄມ້ວົງກົບປະຕູ ແລະ ປ່ອງຢ້ຽມ ສຳເລັດຮູບ** ແມ່ນຜະລິດຕະພັນໄມ້ ທີ່ເຮັດດ້ວຍໄມ້ເນື້ອແຂງແບບເສັ້ນດຽວ ຫຼື ອັດປະສານ ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ກົບ, ເຊາະຮ່ອງບັງໃບ, ຕັດມຸມສາກຫົວວົງກົບ ຕົວຜູ້ ແລະ ຕົວແມ່ ທີ່ສາມາດປະກອບເປັນຊຸດ ຫຼື ບໍ່ປະກອບເຂົ້າກັນ ເພື່ອສະດວກໃນການຂົນສົ່ງ.

6.2 **ໄມ້ມຸງຫຼັງຄາ ແລະ ໄມ້ຮົ້ວ** ແມ່ນຜະລິດຕະພັນໄມ້ ໂດຍຜ່ານຂະບວນການປຸງແຕ່ງເຊັ່ນ: ອົບ, ຕັດຂະໜາດ, ກົບ, ແລ່ນໂລເຕີ ເພື່ອໃຫ້ເປັນຮູບທີ່ຕ້ອງການ, ລົບຫຼຸ່ມ ຫຼື ແລ່ນຮ່ອງ, ລົງສີ ຫຼື ບໍ່ລົງສີ ແລະ ຕ້ອງນຳໃຊ້ສະເພາະປະເພດໄມ້ຄຸ້ມຄອງ 1, 2, 3.

6.3 **ແຜ່ນໄມ້ປະກອບແບບລາຍໂມເສດ** ແມ່ນການນຳເອົາແຜ່ນໄມ້, ໄມ້ນ້ອຍ, ໄມ້ສັ້ນ ມາຕິດເຂົ້າກັນດ້ວຍກາວ ແລ້ວໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ກົບລະອຽດ ເພື່ອໃຫ້ເປັນຮູບທີ່ຕ້ອງການ, ລົງສີ ຫຼື ບໍ່ລົງສີ ແລະ ຕ້ອງນຳໃຊ້ສະເພາະປະເພດໄມ້ຄຸ້ມຄອງ 1, 2, 3.

6.4 **ຜະລິດຕະພັນໄມ້ຂອບອັດເປັນຊັ້ນ** ແມ່ນການນຳເອົາແຜ່ນໄມ້ ມາຕິດເຂົ້າກັນດ້ວຍກາວ ເປັນຊັ້ນ, ໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ, ຊຶ່ງຜ່ານຂະບວນການປຸງແຕ່ງເຊັ່ນ: ອົບ, ຊອຍ ແລະ ຕັດຂະໜາດ, ກົບລະອຽດ ແລະ ອັດເປັນຊັ້ນຕາມຂະໜາດທີ່ໄດ້ກຳນົດ, ກົບສີ່ດ້ານ, ຂັດ, ລົງສີ ຫຼື ບໍ່ລົງສີ ແລະ ຕ້ອງນຳໃຊ້ສະເພາະປະເພດໄມ້ຄຸ້ມຄອງ 1, 2, 3.

6.5 **ແປ້ນຂັ້ນໄດແນວນອນ ແລະ ແນວຕັ້ງ** ຕ້ອງໄດ້ຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ກົບໃສ, ລົບຫຼຸ່ມ, ຕັດຂະໜາດ, ຂັດລຽບ ມີທັງແບບເປັນໄມ້ແຜ່ນດຽວ ຫຼື ອັດເຊື່ອມຕໍ່ປະສານຕາມຂະໜາດທີ່ໄດ້ກຳນົດໄວ້.

## 7. ເຄື່ອງຫັດຖະກຳທີ່ເຮັດດ້ວຍໄມ້

ເຄື່ອງຫັດຖະກຳທີ່ເຮັດດ້ວຍໄມ້ ປະກອບດ້ວຍຫລາຍຊະນິດ ແລະ ຮູບແບບ ເຊັ່ນ: ເຄື່ອງໃຊ້ເທິງໂຕະ, ຊຽງ (ລາຍລະອຽດຂອງຊຽງໃຫ້ເບິ່ງຂໍ້ 3 ຂອງຂໍ້ II: ລາຍການ (ບັນຊີ) ຜະລິດຕະພັນໄມ້ທີ່ຫ້າມສົ່ງອອກ), ເຄື່ອງຫັດຖະກຳໄມ້, ເຄື່ອງດົນຕີ ແລະ ອື່ນໆ. ສຳລັບໄມ້ແກະສະຫລັກ ຕ້ອງມີຂະໜາດນ້ອຍກວ່າ ຫລື ເທົ່າກັບ: ໜາ 2,5 ຊມ, ກວ້າງ 30 ຊມ ແລະ ຍາວ 100 ຊມ ລົງມາ. ວັດຖຸດິບທີ່ນຳໃຊ້ ຕ້ອງແມ່ນໄມ້ປູກ, ໄມ້ທຳມະຊາດເນື້ອແຂງ ແລະ ໄມ້ຄຸ້ມຄອງ 1,2,3 ເທົ່ານັ້ນ.

## 8. ເຄື່ອງເຟີນິເຈີທີ່ເຮັດດ້ວຍໄມ້

ເຄື່ອງເຟີນິເຈີທີ່ເຮັດດ້ວຍໄມ້ ປະກອບດ້ວຍຫລາຍຊະນິດ ແລະ ຮູບແບບ, ແມ່ນຜະລິດຕະພັນໄມ້ສຳເລັດຮູບ ທີ່ສາມາດນຳໃຊ້ໄດ້ເລີຍ, ສາມາດແຍກ ຫຼື ປະກອບເຂົ້າກັນໄດ້ທັນທີ (knock-down). ຜະລິດຕະພັນດັ່ງກ່າວ ສາມາດສົ່ງອອກເປັນຊິ້ນສ່ວນ, ແຕ່ຕ້ອງຄົບເປັນຊຸດ ຫຼື ເປັນໜ່ວຍ ແລະ ມີການຫຸ້ມຫໍ່ເປັນຊຸດ ຫຼື ເປັນໜ່ວຍຕາມຄວາມຕ້ອງການຂອງຕະຫຼາດ ແລະ ຕ້ອງຜ່ານຂະບວນການປຸງແຕ່ງຕາມຮູບແບບຂອງແຕ່ລະຜະລິດຕະພັນ ເຊັ່ນ: ໂຕະ, ຕັ່ງ, ຕູ້, ຕຽງ ແລະ ອື່ນໆ, ຊຶ່ງບໍ່ອະນຸຍາດໃຫ້ສົ່ງອອກເປັນຊິ້ນສ່ວນດຽວ ເຊັ່ນ: ຂາໂຕະຢ່າງດຽວ, ຂາຕັ່ງຢ່າງດຽວ. ວັດຖຸດິບທີ່ນຳໃຊ້ ຕ້ອງແມ່ນໄມ້ປູກ, ໄມ້ທຳມະຊາດເນື້ອແຂງ ແລະ ໄມ້ຄຸ້ມຄອງ 1,2,3 ເທົ່ານັ້ນ.

### 9. ຜະລິດຕະພັນທີ່ເຮັດດ້ວຍໄມ້ປ່ອງ ແລະ ຫວາຍ

ຜະລິດຕະພັນໄມ້ປ່ອງ ແມ່ນຜະລິດຕະພັນທີ່ຜ່ານຂະບວນການປຸງແຕ່ງຂັ້ນຕົ້ນ ຫຼື ສຳເລັດຮູບ ເຊັ່ນ: ຜ່າເປັນຄີ້ວ, ເປັນປ່ຽງ, ເຫຼົາເປັນຮູບຊົງກົມ, ອັດເຊື່ອມຕໍ່ປະສານ ແລະ ອື່ນໆ.

ຜະລິດຕະພັນຈາກຫວາຍ ຕ້ອງເປັນຜະລິດຕະພັນສຳເລັດຮູບ ແລະ ນຳໃຊ້ໄດ້ເລີຍເຊັ່ນ: ຕູ້, ໂຕະ, ຕັ່ງ, ຕຽງ ແລະ ອື່ນໆ.

### 10. ໄມ້ຄ້ຳແບບ, ໄມ້ຂ້າວ, ໄມ້ຮົ້ວ (ໄມ້ກົມ) ແລະ ໄມ້ເລື່ອຍເປັນແຜ່ນ (ໄມ້ປູກ)

ໄມ້ປູກສຳລັບເຮັດໄມ້ຄ້ຳແບບ, ໄມ້ຮົ້ວ, ໄມ້ຂ້າວ ແລະ ອື່ນໆ (ໄມ້ກົມ) ທີ່ເປັນລຳຕົ້ນ ຕ້ອງແມ່ນຜະລິດຕະພັນໄມ້ຈາກສວນປູກ (ໄມ້ວິກ, ໄມ້ກະຖິນນາລົງ ແລະ ກະຖິນເທພາ), ມີເສັ້ນຜ່າກາງນ້ອຍກວ່າ ຫຼື ເທົ່າກັບ 12 ຊັງຕີແມັດລົງມາ.

ໄມ້ປູກທີ່ເລື່ອຍເປັນແຜ່ນ ລວມທັງຜະລິດຕະພັນທຸກຊະນິດຈາກໄມ້ປູກ ຕ້ອງແມ່ນຜະລິດຕະພັນໄມ້ຈາກສວນປູກ (ໄມ້ວິກ, ໄມ້ກະຖິນນາລົງ ແລະ ກະຖິນເທພາ), ມີຂະໜາດ ຄວາມໜາ 5 ຊມ; ຄວາມກ້ວາງ 15 ຊມ ແລະ ຄວາມຍາວ 200 ຊມ ລົງມາ.

ໄມ້ ແລະ ຜະລິດຕະພັນໄມ້ເຫລົ່ານີ້ ຕ້ອງແມ່ນໄມ້ຈາກສວນປູກ ແລະ ຕ້ອງເປັນໄມ້ຕະກຸນໄມ້ວິກ, ໄມ້ກະຖິນນາລົງ ແລະ ກະຖິນເທພາ ເທົ່ານັ້ນ, ນອກຈາກນີ້ ແມ່ນບໍ່ອະນຸຍາດໃຫ້ສົ່ງອອກ.

### 11. ຜະລິດຕະພັນເຫຍື່ອໄມ້

**ຜະລິດຕະພັນເຫຍື່ອໄມ້** ແມ່ນຜະລິດຕະພັນໄມ້ຈາກສວນປູກ (ໄມ້ວິກ, ໄມ້ກະຖິນນາລົງ ແລະ ກະຖິນເທພາ) ທີ່ໄດ້ຜ່ານຂະບວນການປຸງແຕ່ງ ເຊັ່ນ: ຕັດ, ບົດ, ຕົ້ມ, ສະກັດ, ກັ່ນ ຈົນໄດ້ເຫຍື່ອໄມ້ລະອຽດ (Cellulose fiber powder ຫຼື wood fiber devised from wood pulp).

### 12. ໄມ້ເກດສະໜາ (ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ)

ໄມ້ເກດສະໜາທີ່ສັບເປັນປ່ຽງນ້ອຍໆ ຫຼື ບົດເປັນຝຸ່ນ ຕ້ອງແມ່ນໄມ້ເກດສະໜາຈາກສວນປູກທີ່ນຳໃຊ້ແຮງງານຄົນ ຫຼື ເຄື່ອງຈັກບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ.

## II. ລາຍການ (ບັນຊີ) ຜະລິດຕະພັນໄມ້ທີ່ຫ້າມສົ່ງອອກ

ຜະລິດຕະພັນໄມ້ທີ່ຫ້າມສົ່ງອອກ ແມ່ນຜະລິດຕະພັນໄມ້ທຸກປະເພດ, ຊະນິດ, ຮູບແບບ ແລະ ຂະໜາດທີ່ບໍ່ໄດ້ລະບຸໄວ້ໃນລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ເຊັ່ນ: ຜະລິດຕະພັນໄມ້ເສົາໃຊ; ໄມ້ເສົາ ແລະ ຄານອັດປະສານ; ຜະລິດຕະພັນໄມ້ໂຕະ ແລະ ຕັ່ງທີ່ເປັນໜ້າໄມ້ທຳມະຊາດແຜ່ນດຽວທີ່ມີຂະໜາດໃຫ່ຍ; ຜະລິດຕະພັນຊຽງທີ່ມີຂະໜາດໃຫ່ຍກວ່າ (ໜາ 5 ຊມ, ກວ້າງ 30 ຊມ ແລະ ຍາວ 50 ຊມ) ຂຶ້ນໄປ; ໄມ້ປູກ (ໄມ້ກົມ) ທີ່ມີລຳຕົ້ນຂະໜາດໃຫ່ຍກວ່າ 12 ຊມ ຂຶ້ນໄປ (>12 ຊມ); ຖ່ານດຳທຸກຊະນິດ; ໄມ້ປູພື້ນສຳລັບພາຍນອກ; ໄມ້ບົວ; ໄມ້ປະກອບຖັງລົດ; ໂລງສົບ; ລູກຕິ່ງ; ຮາວພະນັກ ແລະ ຮາວພະນັກອັດເຊື່ອມຕໍ່ປະສານ, ຊຶ່ງລາຍລະອຽດແມ່ນຄັດຕິດໃນເອກະສານຊ້ອນທ້າຍທີ 02 ຂອງຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ດັ່ງນີ້:

1. ຜະລິດຕະພັນໄມ້ເສົາໄຊ; ໄມ້ເສົາ ແລະ ຄານອັດປະສານ; ໄມ້ບົວ, ໄມ້ປູພື້ນສໍາລັບພາຍນອກ ລວມທັງຜະລິດຕະພັນໄມ້ສໍາລັບການກໍ່ສ້າງ ເຊັ່ນ: ໄມ້ໂຄງຫຼັງຄາ (ໄມ້ອົກໄກ່, ໄມ້ໂຄງເພດານ, ໄມ້ຂ້າວ, ໄມ້ສີບົວ, ໄມ້ຂັດແປ, ໄມ້ເສົາດັ້ງ, ໄມ້ປ້ານລົມ, ປ້ານຊາຍ, ໄມ້ຂື່, ໄມ້ຄໍສອງ), ໄມ້ຂາງໜີບ, ໄມ້ແປ້ນພື້ນ, ໄມ້ຕົງ, ໄມ້ຂາງ ທີ່ບໍ່ໄດ້ບັນຈຸຢູ່ໃນ ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ. ຜະລິດຕະພັນໄມ້ດັ່ງກ່າວນີ້ ແມ່ນນໍາໃຊ້ໄມ້ປະເພດຕ່າງໆ (ໄມ້ຫວງຫ້າມ, ໄມ້ພິເສດ, ໄມ້ຄຸ້ມຄອງ 1,2,3) ຊຶ່ງອາດຈະເປັນໄມ້ລໍາດຽວ (ໄມ້ກົມ), ໄມ້ຕີຕັບສີ່ຫລ່ຽມ, ໄມ້ເລື່ອຍປະເພດຕ່າງໆ, ຜະລິດຕະພັນໄມ້ເຄິ່ງສໍາລັດຮູບ ຫລື ສໍາລັດຮູບ ແມ່ນບໍ່ອະນຸຍາດໃຫ້ສົ່ງອອກ.

2. ເຄື່ອງເຟີນີເຈີ ທີ່ເຮັດດ້ວຍໄມ້ທຸກຊະນິດ ທີ່ເປັນໜ້າໄມ້ທໍາມະຊາດແຜ່ນດຽວ, ຕົວຢ່າງ: ໂຕະ, ຕັ່ງ, ສະໂລ່ງໄມ້ ທີ່ໄດ້ຈາກການເລື່ອຍ, ຊອຍ ຕາມຂະໜາດຮູບຊົງຂອງທ່ອນໄມ້ ຂະໜາດໃຫ່ຍ ຫຼື ໄດ້ຈາກການເລື່ອຍແປຮູບ, ຕີຕັບ ທີ່ມີໜ້າຕ່າງຂະໜາດໃຫ່ຍ ເປັນໜ້າໄມ້ແຜ່ນດຽວ ເພື່ອປະກອບເປັນຊິ້ນສ່ວນຕ່າງໆ ຂອງໂຕະ, ຕັ່ງ, ສະໂລ່ງ ແລະ ອື່ນໆ ທີ່ເປັນການຊົ້ນເປືອງວັດຖຸດິບຫຼາຍ, ມີລັກສະນະຮູບຮ່າງ ແລະ ຮູບພາບ ດັ່ງທີ່ກໍານົດໃນ ຂໍ້ 03 (ຂອງຮູບພາບ) ຂອງລາຍການ (ບັນຊີ) ຜະລິດຕະພັນໄມ້ ທີ່ຫ້າມສົ່ງອອກ.

3. ຊຽງໄມ້ ປະກອບດ້ວຍ 02 ຊະນິດ ຄື: ຊຽງມົນ ແລະ ຊຽງສີ່ຫລ່ຽມ. ສໍາລັບຊຽງມົນ ທີ່ມີຂະໜາດໃຫຍ່ກວ່າ: ໜ້າຕ່າງ 30 ຊມ, ຄວາມໜາ 5 ຊມ ຂຶ້ນໄປ ແມ່ນຫ້າມສົ່ງອອກ. ຊຽງສີ່ຫລ່ຽມປະກອບດ້ວຍ 2 ຮູບແບບ ຄື: ຊຽງສີ່ຫລ່ຽມຍາວ ແລະ ສີ່ຫລ່ຽມມົນທົນ. ຊຽງສີ່ຫລ່ຽມຍາວ ທີ່ມີຂະໜາດໃຫຍ່ກວ່າ: ໜາ 5 ຊມ, ກ້ວາງ 30 ຊມ, ຍາວ 50 ຊມ ຂຶ້ນໄປ ແລະ ຊຽງສີ່ຫລ່ຽມມົນທົນ ທີ່ມີຂະໜາດໃຫຍ່ກວ່າ: ໜາ 5 ຊມ, ກ້ວາງ ແລະ ຍາວ 30 ຊມ ຂຶ້ນໄປ (ໂດຍໃຫ້ຮັກສາຄວາມກວ້າງໄວ້ ແລະ ຫລຸດຄວາມຍາວລົງ ຈາກຊຽງສີ່ຫລ່ຽມຍາວ) ແມ່ນຫ້າມສົ່ງອອກ.

ຊຽງທຸກຊະນິດ ແລະ ຮູບແບບ ຕ້ອງມີຂະໜາດນ້ອຍກວ່າ ຫລື ເທົ່າກັບ ຂະໜາດທີ່ກໍານົດໄວ້ຂ້າງເທິງນີ້ ຈຶ່ງສາມາດສົ່ງອອກໄດ້.

4. ໄມ້ປູກທຸກປະເພດ (ໄມ້ກົມ) ທີ່ມີຂະໜາດໜ້າຕ່າງໃຫ່ຍກ່ວາ 12 ຊມ ຂຶ້ນໄປ ເຊັ່ນ: ໄມ້ວິກ, ໄມ້ກະຖິນນາລົງ ແລະ ກະຖິນເທພາ ແມ່ນບໍ່ອະນຸຍາດໃຫ້ສົ່ງອອກ, ນອກຈາກທີ່ໄດ້ກໍານົດໄວ້ໃນຂໍ້ 10 ຂອງຂໍ້ I: ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ.

5. ຖ່ານດໍາທຸກຊະນິດ ແມ່ນຖ່ານທີ່ຜະລິດ ຫລື ເຜົາ ຈາກໄມ້ປະເພດຕ່າງໆ (ນອກຈາກໄມ້ຕິ້ວ) ຂອງຫົວໜ່ວຍທຸລະກິດ ຫລື ຄອບຄົວຂອງປະຊາຊົນ ຊຶ່ງມີຄວາມແຕກຕ່າງຈາກ ຖ່ານຂາວ ແລະ ຖ່ານອັດແທ່ງ ແລະ ອັດເມັດຈາກຂີ້ເລື່ອຍ. ຖ່ານດໍາທຸກຊະນິດ ແມ່ນບໍ່ອະນຸຍາດໃຫ້ສົ່ງອອກ.

6. ໄມ້ປະກອບຖັງລົດ ແມ່ນຜະລິດຕະພັນໄມ້ທີ່ມີຂະໜາດສະເພາະ ເຊັ່ນ: ໄມ້ຂາງລົດ, ໄມ້ປູພື້ນລົດ, ໄມ້ຝາຂ້າງລົດ ຊຶ່ງມີລັກສະນະຄ້າຍຄືກັນກັບໄມ້ສໍາລັບການກໍ່ສ້າງ. ໄມ້ປະກອບຖັງລົດ ອາດຈະເປັນຜະລິດຕະພັນໄມ້ເລື່ອຍແປຮູບ, ໄມ້ເຄິ່ງສໍາເລັດຮູບ ຫລື ສໍາເລັດຮູບ ຊຶ່ງຜະລິດຕະພັນດັ່ງກ່າວບໍ່ອະນຸຍາດໃຫ້ສົ່ງອອກ.

7. ໂລງສົບທຸກຊະນິດ ແລະ ທຸກຮູບແບບ ທີ່ຜະລິດຈາກໄມ້ປະເພດຕ່າງໆ, ທັງສຳເລັດຮູບ ແລະ ບໍ່ສຳເລັດຮູບ, ສາມາດປະກອບເຂົ້າກັນເປັນໜ່ວຍ ຫລື ແຍກເປັນຊິ້ນສ່ວນ (knock-down) ແມ່ນບໍ່ອະນຸຍາດໃຫ້ສົ່ງອອກ.

8. ລູກຕຶ່ງ, ຮາວພະນັກ, ຮາວພະນັກອັດເຊື່ອມຕໍ່ປະສານ ແມ່ນຜະລິດຕະພັນໄມ້ທີ່ຜ່ານຂັ້ນຕອນຂອງການປຸງແຕ່ງ ເຊັ່ນ: ສ່ຽນ, ກຶ່ງຂຶ້ນຮູບ, ຕັດແຕ່ງ, ອົບ, ຕິດ, ອັດປະສານ, ຕັດຂະໜາດ, ຂຶ້ນຮູບ, ແລ່ນຄິ້ວບົວຢ່າງລະອຽດ, ຂັດລຽບ ແລະ ອື່ນໆ. ຜະລິດຕະພັນດັ່ງກ່າວ ອາດຈະເປັນເຄິ່ງສຳເລັດຮູບ ຫລື ສຳເລັດຮູບ ກໍບໍ່ອະນຸຍາດໃຫ້ສົ່ງອອກ.

## III. ຮູບພາບປະກອບ

ນອກຈາກຄຳອະທິບາຍເນື້ອໃນ ຂອງລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກແລ້ວ ຍັງມີຮູບພາບປະກອບ ເພື່ອໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດໄດ້ງ່າຍ ແລະ ຖືກຕ້ອງ ເພາະວ່າ ບາງຊະນິດ ແລະ ຮູບແບບຜະລິດຕະພັນໄມ້ ມີຄວາມຫຍຸ້ງຍາກໃນການອະທິບາຍ ຫລື ໃຫ້ຄວາມໝາຍ ຈຶ່ງໃຫ້ເບິ່ງຮູບພາບປະກອບ ຕາມເອກະສານຊ້ອນທ້າຍ 1 ແລະ 2 ຂອງ ຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ເລກທີ 1833/ອຄ, ວັນທີ 03/10/2016.

ຫົວໜ້າກົມ

ມະໂນຣັກ ຣາຊະຈັກ